ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1224 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 09 ມິຖຸນາ 2023

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
- ວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ

ເລື່ອງ: ການລົງທະບຽນ ຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023.

ເພື່ອເປັນຂໍ້ມູນໃຫ້ແກ່ການຄຸ້ມຄອງຕິດຕາມການເຄື່ອນໄຫວ ແລະ ຊຳລະ/ຮັບຊຳລະເງິນຕາຕ່າງປະເທດຈາກການນຳເຂົ້າ-ສົ່ງອອກສິນຄ້າ ຂອງວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ຈຳກັດການຄ້ານອກລະບົບ, ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:

1. ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການສົມທົບກັບ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ ແຈ້ງໃຫ້ ບັນດາວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃຫ້ລົງທະບຽນນຳ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023 ໂດຍສະເພາະໝວດສິນຄ້າ ດັ່ງຕໍ່ໄປນີ້:

| ລ/ດ | ປະເພດລາຍການສິນຄ້າ | ໝວດລະຫັດພາສີ |
|---|---|---|
| 1 | ສັດປີກ ແລະ ຜະລິດຕະພັນຈາກສັດປີກ (ຊີ້ນ ແລະ ໄຂ່) | 0105, 0207, 0407 |
| 2 | ໝູ ແລະ ຊີ້ນໝູ | 0103, 0203 |
| 3 | ງົວ, ຄວາຍ ແລະ ຊີ້ນ | 0102, 0201, 0202 |
| 4 | ປານິນ ແລະ ຜະລິດຕະພັນປາ | 0301994100<br>0302710000<br>0303230000 |

| ລ/ດ | ປະເພດລາຍການສິນຄ້າ | ໝວດລະຫັດພາສີ |
|---|---|---|
| | | 0304310000<br>0304510000<br>0304610000<br>0304930000 |
| 5 | ພືດ-ຜັກ (ຜັກບົ່ວ, ຜັກສະລັດ, ຜັກກະລໍ່າປີ, ຜັກກາດ, ຫົວກາລົດ, ພືດຕະກູນຖົ່ວ, ຫົວມັນ, ສາລີ ແລະ ອື່ນໆ) ແລະ ໝາກໄມ້ | 07, 08, 1005 |
| 6 | ເຂົ້າກິນ (ເຂົ້າເປືອກ, ເຂົ້າສານ, ເຂົ້າກ້ອງ, ເຂົ້າສີແລ້ວ ຫຼື ສີບໍ່ລະອຽດແລ້ວ, ເຂົ້າປາຍ ແລະ ອື່ນໆ | 1006 |
| 7 | ສິນຄ້າບໍລິໂພກ: | |
| | ກາເຟສໍາເລັດຮູບ (ຈະຂົ້ວ ຫຼື ແຍກກາເຟອິນ ຫຼື ບໍ່ກໍ່ຕາມ) | 0901 |
| | ຊາ (ຈະປຸງແຕ່ງກິ່ນ ຫຼື ບໍ່ກໍ່ຕາມ) - ລະຫັດ | 0902 |
| | ເຄື່ອງດື່ມ (ນໍ້າແຮ່ທາດ ແລະ ນໍ້າອັດລົມ) | 220110 |
| | ເກືອກິນ | 250100 |
| | ປາແດກ | 0305310000<br>0305440000<br>0305520000<br>0305640000 |
| | ນໍ້າຕານຊາຍ | 170191, 170199 |
| 8 | ອາຫານສັດ (ອາຫານປຸງແຕ່ງທີ່ໃຊ້ສໍາລັບລ້ຽງສັດ ເປັນຕົ້ນ) | 2309 |
| 9 | ຝຸ່ນ (ປຸ໋ຍ) (ຝຸ່ນເຄມີ, ຝຸ່ນຊີວະພາບ ແລະ ອື່ນໆ) | 31 |
| 10 | ວັດສະດຸກໍ່ສ້າງ: | |
| | ຊີມັງ | 2522, 2523 |
| | ເຫຼັກ (ໂດຍສະເພາະເຫຼັກເສັ້ນ, ເຫຼັກຮູບປະພັນຕ່າງໆ) | 72, 73 |
| | ນໍ້າສີ | 3208, 3209, 3210 |
| 11 | ສິນຄ້າອຸປະໂພກ: | |
| | ສະບູ່ອາບນໍ້າ | 3401 |
| | ສະບູ່ຝຸ່ນ (ແຟັບ) | 3402 |
| | ເຈ້ຍທິຊຊູ່ | 4803 |
| 12 | ຍານພາຫະນະທາງບົກ | 8701-8711 |
| 13 | ນໍ້າມັນເຊື້ອໄຟ ແລະ ອາຍແກັດ | 2710, 2711 |

ວິສາຫະກິດທີ່ດໍາເນີນກິດຈະການນໍາເຂົ້າ ແລະ ສົ່ງອອກ ລາຍການສິນຄ້າທີ່ລະບຸໄວ້ໃນຕາຕະລາງຂ້າງເທິງ ຕ້ອງລົງທະບຽນໃຫ້ສໍາເລັດ ກ່ອນວັນທີ **<u>31 ສິງຫາ 2023</u>**. ສ່ວນລາຍການສິນຄ້າອື່ນນອກຈາກທີ່ລະບຸໄວ້ໃນຕາຕະລາງຂ້າງເທິງນີ້ ແມ່ນຈະມີແຈ້ງການຕາມພາຍຫຼັງ.

**2.** ໃຫ້ວິສາຫະກິດ ປະກອບເອກະສານແຈ້ງລົງທະບຽນ ຕາມແບບພິມທີ່ຄັດຕິດມາພ້ອມນີ້ ຕໍ່ ກົມການນໍາເຂົ້າ ແລະ ສົ່ງອອກ ໂດຍກົງ ຫຼື ສົ່ງຜ່ານອີເມວ: imexdiv@laomoic.org ຫຼື ຕິດຕໍ່ພົວພັນກັບພະນັກງານຜູ້ຮັບຜິດຊອບ ໂທ: 020 9699 6565 ຫຼື 020 55510038.

3. ວິສາຫະກິດໃດທີ່ບໍ່ໄດ້ລົງທະບຽນນຳ ກົມການນຳເຂົ້າ ແລະ ສົ່ງອອກ ຈະບໍ່ສາມາດດຳເນີນການນຳເຂົ້າ ແລະ ສົ່ງອອກສິນຄ້າໄດ້.
4. ວິສາຫະກິດທີ່ສຳເລັດການລົງທະບຽນແລ້ວ ຕ້ອງໃຫ້ແຈ້ງທະນາຄານແຫ່ງ ສປປ ລາວ ກ່ຽວກັບເລກບັນຊີເງິນຝາກທັງໝົດທີ່ໄດ້ເປີດໄວ້ກັບທະນາຄານທຸລະກິດ ເພື່ອຂໍໜັງສືຢັ້ງຢືນໄປແຈ້ງຕໍ່ທະນາຄານທຸລະກິດ ໃຫ້ຫັນບັນຊີເງິນຝາກທີ່ກຳລັງນຳໃຊ້ຢູ່ນັ້ນ ເປັນບັນຊີເງິນຝາກສະເພາະກ່ຽວກັບການນຳເຂົ້າ-ສົ່ງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ດ້ວຍ.

**ຮັກສາການແທນຫົວໜ້າຫ້ອງການ**

ຫ້ອງການ

ປອ.ບົວວັນ ວິລະວົງ